**P.D.D.P 2** ໂຄງການພັດທະນາ ຊົນນະບົດ ເມືອງຜົ້ງສາລີ

ຄ.ພ.ມ.ຜ 2 **PROJET DE DEVELOPPEMENT RURAL DU DISTRICT DE PHONGSALY**

# ການເພາະຊຳເບັ້ຽຫວາຍ ເພື່ອນຳໄປປູກ




*ດຣ. ລູ ຊວງຢຸນ*

*ຫູ ຈຽງຊຽງ*

*ສວນພຶກສາສາດເຂດຮ້ອນສິບສອງພັນນາ,*

*ສະຖາບັນການສຶກສາວິທະຍາສາດຂອງຈີນ.*

# ການເພາະຊຳເບັ້ງຫວາຍ ເພື່ອນຳໄປປູກ

ຫວາຍແມ່ນ ຜະລິດຕະພັນຈາກທຳມະຊາດເກີດໃນເຂດຮ້ອນທີ່ມີປ່າຕຶບດົງໜາ ຫວາຍເປັນເຄືອທີ່ມີໜາມ ຈັດເຂົ້າໃນຄອບຄົວ *Palmae Calamoideae Celameae* ແລະ ຈັດຢູ່ໃນຕະກຸນ *Calamus* ເຊິ່ງມີຄຸນຄ່າສູງທາງດ້ານເສດຖະກິດ.

ຫວາຍຍັງເປັນຊັບພະຍາກອນເຄື່ອງປ່າຂອງດົງໃນເຂດຮ້ອນ ແລະ ເຂດຮ້ອນຕອນໃຕ້ທີ່ມີຄຸນຄ່າສຳຄັນທາງດ້ານເສດຖະກິດ ຍ້ອນເຄືອຂອງມັນມີລັກຊະນະພິເສດທາງດ້ານສິນລະປະ ແລະ ຫັດຖະກຳ, ເປັນວັດຖຸທີ່ດີເລີດໃນການແປຮູບເປັນໂຕະ, ຕັ່ງ, ໃຊ້ສອຍພາຍໃນເຮືອນ, ເຮັດເປັນເຄື່ອງມື ແລະ ເຄື່ອງເອ້ຕົບແຕ່ງ, ເລີ້ມແຕ່ຊຸມປີ 60 ເປັນຕົ້ນມາ ການຄ້າສາກົນກ່ຽວກັບເຄື່ອງໃຊ້ສອຍທີ່ເຮັດດ້ວຍຫວາຍສັງລວມຜະລິດຕະພັນ ຄິດເປັນມູນຄ່າເກືອ 2 ຕື້ໂດລາສະຫະລັດ, ມູນຄ່າການຄ້າຂາຍເຄື່ອງໃຊ້ສອຍທີ່ເຮັດດ້ວຍຫວາຍຕົກເປັນເງິນ ຫຼາຍຮ້ອຍລ້ານ CNY ແລະ ຍັງແມ່ນໜຶ່ງໃນລາຍການສິນຄ້າຂາອອກທີ່ສ້າງລາຍຮັບຕົກເປັນມູນຄ່າຫຼາຍກວ່າຮ້ອຍລ້ານໂດລາ US ຕໍ່ປີ. ດ້ວຍເຫດນີ້ຫວາຍຈຶ່ງເປັນເຄື່ອງປ່າຂອງດົງທີ່ມີຄວາມສຳຄັນຄຽງຄູ່ກັບໄມ້ ແລະ ໄມ້ປ່ອງ ແລະ ມີບົດບາດສຳຄັນທາງດ້ານເສດຖະກິດຂອງພາກພື້ນອີກດ້ວຍ.

ໃນສະໄໝກ່ອນປະຊາຊົນມີແຕ່ຂຸດຄົ້ນເອົາ ຫວາຍປ່າ ມານຳໃຊ້ຢ່າງດຽວ. ຍ້ອນແນວນັ້ນຈຳນວນຫຼາຍຈຶ່ງຫຼຸດລົງ, ສະນັ້ນແຫຼ່ງສະໜອງວັດຖຸດິບ(ຫວາຍ) ຈຶ່ງບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງຕະລາດ. ຍົກຕົວຢ່າງ ຫຼັງຈາກຊຸມປີ 80 ເປັນຕົ້ນມາ, ແຕ່ລະປີປະເທດຈີນ ຈຶ່ງນຳເຂົ້າ ຫວາຍຈາກປະເທດອາຊີຕາວັນອອກສ່ຽງໃຕ້ ເປັນຕົ້ນແມ່ນ ອິນໂດເນເຊຍ ແລະ ມາເລເຊຍເປັນຈຳນວນ 20 000 ຫາ 30 000 ໂຕນ ຈົນຕົກມາຮອດລະຍະທີ່ທາງປະເທດ ອິນໂດເນເຊຍ ງົດການສົ່ງສິນຄ້າດັ່ງກ່າວອອກນອກປະເທດໃນປີ 1995. ຍ້ອນແນວນັ້ນການຮັກສາ, ຂຸດຄົ້ນ ແລະ ນຳໃຊ້ຫວາຍແບບສົມເຫດສົມຜົນລວມທັງການຂະຫຍາຍການປູກຫວາຍແບບວິທະຍາສາດຈຶ່ງນິຍົມແຜ່ຫຼາຍຂຶ້ນ, ເລີ້ມແຕ່ປີ 1965 ເປັນຕົ້ນມາ ສະຖາບັນສວນພຶດສາສາດໃນເຂດຮ້ອນ ຊີຊວນບານນາ ຂອງ ສ ປ ຈີນ ຈຶ່ງດຳເນີນການຄົ້ນຄ້ວາກ່ຽວກັບແຫຼ່ງກະຈາຍຂອງແນວພັນຫວາຍ ຢູ່ໃນເຂດແຂວງ ຢູນານ, ໄດ້ຄັດເລືອກເອົາແນວພັນ ແລະ ນຳໄປປະສົມພັນ. ຈາກນັ້ນຈຶ່ງນຳເອົາເທັກນິກການປູກແບບວິທະຍາສາດ ຊຶ່ງໄດ້ຈາກການຄົ້ນຄ້ວາໄປເຜີຍແຜ່ໃນເຂດ ບູລັງຊັງ( ແຂວງເມັງໄຮ ) ແລະ ເມັງຊັງ( ແຂວງ ຊົງຮອງ ) ແລະ ເຂດອື່ນໆໃນ ຊີຊວນບານນາ.

ເພື່ອຕອບສະໜອງກັບການເຊື້ອເຊີນຂອງໂຄງການ PDDP, ທ່ານອາຈານ ChenJin, ຮອງອຳນວຍການ XTBG, ໄດ້ແຕ່ງຕັ້ງນັກຄົ້ນຄວ້າສອງທ່ານຄື : Hu Jian Xiang ແລະ Zhou Shuangyun ເຂົ້າມາ ສປປ ລາວ ເພື່ອໃຫ້ຄຳແນະນຳໃນດ້ານການເພາະຊຳເບັ້ຍຫວາຍ ທີ່ໄດ້ປະສົມພັນແລ້ວໃນເຂດບ້ານ ສາລາເຮເບ ແລະ ບ້ານ ຈັນເທິງ ໂດຍໄດ້ກ້າເບັ້ຍຫວາຍເປັນຈຳນວນ 4 014 ເບັ້ຍໃສ່ໃນກົງຢ່າງ.

ເທັກນິກໃນການເພາະຊຳເບັ້ຍຫວາຍມີຂັ້ນຕອນດັ່ງນີ້.

# 1. ການເກັບ ແລະ ຮັກສາແນວພັນຫວາຍ

ແນວພັນຂອງຫວາຍ *Calamus* ມີຊີວິດສັ້ນ ຍ້ອນວ່າໝາກຂອງຫວາຍປະເພດ *Calamus* ນີ້ມີນໍ້າ ແລະ ລົດຊາດຫອມຫວານ ຈຶ່ງເປັນທີ່ດຶງດູດຂອງສັດມັກເຂົ້າທໍາລາຍ.

ເມັດພັນຫວາຍແຫ້ງຈະເສັຍຄຸນຢ່າງງ່າຍດາຍ.

ຖ້າເກັບຮັກສາເມັດພັນໄວ້ໃນບ່ອນທີ່ມີຄວາມຊຸ່ມສູງຈະເຮັດໃຫ້ເສັຍຄຸນ ແລະ ເໜົ່າເປື່ອຍໄດ້ຢ່າງງ່າຍດາຍເໝືອນກັນ, ສະນັ້ນເມື່ອເກັບໝາກສຸກມາຕ້ອງມີກໍາມະວິທີເກັບຮັກສາໂດຍທັນທີ ຖ້າບໍ່ດັ່ງນັ້ນເມັດພັນຈະເສັຍຄຸນໄດ້ງ່າຍ, ເມັດພັນທີ່ໄດ້ມາຈາກໝາກຫວາຍສຸກຈະຕ້ອງລ້າງໃຫ້ສະອາດ ແລະ ເກັບຮັກສາໄວ້ຢ່າງດີ, ຈະເກັບຮັກສາໄວ້ໃນຂີ້ຊາຍທີ່ມີຄວາມຊຸ່ມຊື່ນ ຫລື ຂີ້ເລື່ອຍກໍ່ໄດ້. ແຕ່ຕ້ອງນໍາຂີ້ເລື່ອຍໄປນັກໄວ້ກ່ອນ ຈາກນັ້ນຈຶ່ງເອົາໄປລວກດ້ວຍນໍ້າຮ້ອນກ່ອນເອົາໄປນໍາໃຊ້ ຫຼື ເອົາເມັດພັນປົນກັບວັດຖຸໃດໜຶ່ງທີ່ເກັບຮັກສາຄວາມຊຸ່ມກໍ່ໄດ້ແລ້ວ ຈຶ່ງເກັບມ້ຽນໄວ້ບ່ອນທີ່ມີຮົ່ມເຢັນດີ.

# 2. ການຄັດເລືອກສະຖານທີ່ຕັ້ງເຮືອນເພາະຊໍາ

ສະຖານທີ່ຕັ້ງເຮືອນເພາະຊໍາທີ່ເໝາະສົມທີ່ສຸດແມ່ນບ່ອນທີ່ໄດ້ຮັບແສງແດດດີ ແລະ ບໍ່ມີລົມ. ດິນເພາະຊໍາຕ້ອງເປັນດິນສົມບູນ, ຮາບພຽງ, ມີຊົນລະປະທານໃຊ້ໄດ້ທຸກເວລາ ແລະ ມີທາງເດີນສະດວກ.

ດິນຊາຍແກມຕົມ ຫຼື ດິນໜຽວເລັກນ້ອຍ ແມ່ນເໝາະສົມແກ່ການເພາະຊໍາ, ຖ້າເປັນດິນໜຽວຈັດລະບາຍນໍ້າໄດ້ຍາກ ແລະ ແຂງແກ່ນເວລາດິນແຫ້ງແມ່ນບໍ່ເໝາະສົມ.

ໃນລະດູໃບໄມ້ປົ່ງ ອຸນຫະພູມຈະສູງຂື້ນຊ້າໆ ເພາະສະນັ້ນການເຕີບໃຫຍ່ຂອງຫວາຍກໍ່ຊັກຊ້າເໝືອນກັນ, ດິນຊາຍເໝາະສົມແກ່ການເພາະຊໍາຫວາຍ ຍ້ອນເກັບຄວາມຊຸ່ມໄດ້ງ່າຍ ແລະ ຖາດກໍ່ແຫ້ງໄວ.

ຖ້າຫາກເລືອກເອົາດິນຮາບພຽງທີ່ອຸດົມສົມບູນເປັນບ່ອນເພາະຊໍາເບັ້ຍຫວາຍຕ້ອງໃຫ້ລະດັບນໍ້າໃນຊັ້ນດິນຢູ່ໃນລະດັບ 1-1,5 ແມັດ, ຖ້າຫາກລະດັບນໍ້າສູງກວ່ານີ້ ລະບົບລະບາຍນໍ້າຕ້ອງໃຫ້ດີ ເພື່ອຫຼີກເວັ້ນນໍ້າຂັງບ່ອນເພາະຊໍາ, ຖ້າເລືອກເອົາບ່ອນເພາະຊໍາທີ່ເປັນຄ້ອຍ, ຄວາມຊັນໃຫ້ຢູ່ໃນລະຫວ່າງ 3-5 ອົງສາ, ຖ້າຊັນກວ່ານີ້ຄວນປັບໃຫ້ເປັນຂັ້ນໄດສາກ່ອນ.

ເມື່ອເລືອກໄດ້ສະຖານທີ່ແລ້ວ ຂັ້ນຕອນຕໍ່ໄປແມ່ນເຮັດໜານກ້າເບັ້ຽ ໂດຍອີງຕາມລັກຊະນະຂອງເນື້ອດິນ, ຂຸດດິນໃຫ້ເລິກ ແລະ ຕຽມດິນໃຫ້ລະອຽດດີ, ຈາກນັ້ນຈຶ່ງເຮັດຮົ້ວດ້ວຍໄມ້ປ່ອງ ຫຼື ໃຊ້ວັດຖຸອື່ນໆກໍ່ໄດ້ ເພື່ອປ້ອງກັນສັດເຂົ້າທໍາລາຍ.



ຮູບສະແດງ 1: ການກະກຽມໜານເພາະຊຳ

# 3. ການເພາະຊຳເບັ້ຍຫວາຍ

## 3.1. ການເກັບ ແລະ ຮັກສາເມັດ

ຫວາຍມີຫຼາຍຊະນິດ ແລະ ໝາກຂອງມັນກໍ່ສຸກຕ່າງໆລະດູກັນ (ສຸກໃນລະດູໜາວ - ໃບໄມ້ປົ່ງ ຫຼື ລະດູຮ້ອນ - ໃບໄມ້ລົ່ນ).

ຖ້າຫາກເກັບເມັດພັນໃນລະດູຮ້ອນຕ້ອງນຳໄປກ້າໃຫ້ໄວທີ່ສຸດ ເພາະວ່າມັນຈະງອກໄວ ຍ້ອນອຸນຫະພູມສູງ.

ກົງກັນຂ້າມ ເມັດພັນຫວາຍທີ່ເກັບໃນລະດູໜາວນັ້ນ ບໍ່ຄວນນຳໄປກ້າໂລດ ເພາະວ່າມັນຈະງອກຊ້າ ຍ້ອນອຸນຫະພູມຕ່ຳ, ຕ້ອງເກັບເມັດໄວ້ຈົນເຖິງໃບໄມ້ປົ່ງແລ້ວຈຶ່ງນຳໄປກ້າຈະມີຄວາມງອກສູງ. ເມັດພັນຂອງຫວາຍຊະນິດ *Calamus Yunannensis var. Xishuangbannaensis, Calamus nambariensis var. Xishuangbannaensis* ແລະ *Calamus nambariensis var. alpinus* ຈະໄດ້ຈາກໝາກຂອງມັນສຸກໃນລະຫວ່າງລະດູໜາວ - ໃບໄມ້ປົ່ງ ແລະ ມີເນື້ອນວນໃນເມັດນຸ້ມດີ. ພາຍຫຼັງເກັບເມັດພັນແລ້ວຈະຕ້ອງເຮັດກຳມະວິທີຂອງຂັ້ນຕອນເມັດພັນໂລດຄື : ກ່ອນອື່ນແມ່ນເກັບເອົາໝາກທີ່ບໍ່ສຸກ ແລະ ບໍ່ສົມບູນອອກໃຫ້ໝົດ. ຈາກນັ້ນ ເອົາໝາກສຸກສົມບູນດີໄປກອງໄວ້ເທິງດິນແຫ້ງ ແລະ ມີອາກາດລະບາຍດີ. ເມື່ອໝາກສຸກອ່ອນດີແລ້ວ ຈຶ່ງບີບເອົາເມັດພັນ ແລະ ນຳໄປລ້າງນ້ຳໃຫ້ສະອາດແລ້ວເອົາຕາກບ່ອນທີ່ຮົ່ມເມື່ອເມັດແຫ້ງກໍ່ນຳເອົາໄປກ້າໄດ້.

ເພື່ອຢາກໃຫ້ເມັດພັນແຕກງອກໄວ ແລະ ສະໝ່ຳສະເໝີດີ ຄວນກ້າໃສ່ໜານທີ່ມີເຮືອນໄຂຮັບປະກັນ.

ໝານກ້າມີຜົນກະທົບຕໍ່ ອັດຕາ ຄວາມແຕກງອກຂອງເບັ້ຍຫວາຍບາງແນວພັນເຊັ່ນຕົວຢ່າງ *Calamus nambariensis var. Xishuangbannaensis* ຊຶ່ງມີເມັດໃຫຍ່ ແລະ ເນື້ອນວນໃນເມັດຫຼາຍ. ໝານກ້າທີ່ເຮັດດ້ວຍຂີ້ຊາຍເມັດໃຫຍ່ແມ່ນດີ ເພາະລະບາຍນ້ຳໄດ້ສະດວກ. ກ້າກ້າເມັດຫວາຍໃສ່ໝານທີ່ເຮັດດ້ວຍຂີ້ຊາຍຈະໄດ້ອັດຕາຄວາມງອກສູງເຖິງ 96,5 % ແຕ່ກ້າກ້າໃສ່ໝານທີ່ເຮັດດ້ວຍຂີ້ຊາຍເມັດນ້ອຍອັດຕາຄວາມງອກຈຸດລຸດລົງເຖິງ 82 % ເມື່ອກ້າໃສ່ດິນດີທຳມະດາ ອັດຕາຄວາມງອກຈະໄດ້ພຽງ 73 %.

ເພື່ອເພີ້ມຄວາມງອກໃຫ້ໄວຂື້ນ ຄວນນຳໃຊ້ຂີ້ຊາຍທີ່ສະອາດເຮັດໝານກ້າ ທີ່ມີລວງກວ້າງ 80 ຊຕມ ແລະ ລວງສູງ 15 ຊຕມ ຈາກນັ້ນກໍ່ຫວ່ານເມັດລົງໃສ່ເທິງໝານ ໂດຍທົ່ວໄປຈະໃຊ້ເມັດ 1,5-2 ກິໂລ/ມ$^2$ ພາຍຫຼັງຫວ່ານເມັດແລ້ວ ຄວນເຮັດໃຫ້ເມັດຝັງລົງດິນເລັກນ້ອຍແລ້ວກໍ່ເອົາຊາຍມາປົກ ເທິງໝານກ້າ (0,5-1 ຊຕມ) ມຸງຫຼັງຄາເຮືອນຊຳເພື່ອກັນຝົນ, ໃຫ້ນ້ຳຢ່າງສະໝ່ຳສະເໝີ, ຮັກສາຄວາມຊຸ່ມຊື່ນໄວ້.

## 3.2. ການກະກຽມກົງທີ່ປະກອບດ້ວຍທາດອາຫານ ເພື່ອເພາະຊຳເບັ້ຽຫວາຍ

ໃນເວລາເຄື່ອນຍ້າຍເບັ້ຽຫວາຍຄວນຈຳກັດການທຳລາຍລະບົບຮາກຂອງມັນ ຈຶ່ງຈະເຮັດໃຫ້ອັດຕາການຕາຍນ້ອຍລົງ. ຍ້ອນແນວນັ້ນການເພາະຊຳເບັ້ຍຫວາຍໃນກົງທີ່ປະກອບທາດອາຫານແມ່ນວິທີເໝາະສົມໂດຍທົ່ວໄປ. ຊ່ວງເວລາເພາະຊຳເບັ້ຍຫວາຍແມ່ນຍາວນານເກີນ 1 ປີ ສະນັ້ນຄວນນຳໃຊ້ກົງຢາງທີ່ຮັບປະກັນຄຸນນະພາບ. ນຳໃຊ້ກົງຢາງທີ່ມີເສັ້ນຜ່າໃຈກາງ 10 ຊຕມ (ລວງກວ້າງ 15 ຊຕມ ກ່ອນໃສ່ດິນ), ສູງ 20 ຊຕມ; ທາງເບື້ອງລຸ່ມຂອງກົງຢາງບໍ່ປິດ. ກ້າເບືອງລຸ່ມຂອງກົງຢາງປິດ, ຄວນເຈາະພື້ນກົງ 5-6 ຮູ ແລະ ເຈາະໃນລະດັບ 1/3 ແຕ່ລຸ່ມຂື້ນເທິງຂອງກົງຢາງ.



*<u>ຮູບສະແດງ 2</u>: ການຕັດກົງຢາງ ເພື່ອທຳການເພາະຊຳເບ້ຍອ່ອນ*

## 3.3. ການຍ້າຍເບັ້ຍຫວາຍຈາກໝານກ້າໄປໃສ່ກົງຢາງ

ເມື່ອເບັ້ຍຫວາຍພົນຂື້ນມາໄດ້ 2-3 ຊຕມ ຈຶ່ງນຳໄປເພາະຊຳໃນກົງຢາງທີ່ປະກອບດ້ວຍທາດອາຫານ, ເວລາເຄື່ອນຍ້າຍເບັ້ຍຫວາຍເຂົ້າມາ ສປປ ລາວ ພວກເຮົາໄດ້ເອົາເບັ້ຍທີ່ຫາກໍ່ປົ່ງຍອດນ້ອຍໆ ເພື່ອຫຼີກລ້ຽງບັນຫາ ແລະ ຮັບປະກັນໃນເວລາຂົນສົ່ງ. ຕ້ອງຣົດນ້ຳໃສ່ກົງຢາງທີ່ກຽມໄວ້ນັ້ນໃຫ້ເຕັມ ຈາກນັ້ນໃນຕອນເຊົ້າ ຫຼື ຕອນແລງໃນຍາມແດດອ່ອນຂອງມື້ຕໍ່ມາກໍ່ນຳເອົາເບັ້ຍຫວາຍໄປປູກໃສ່. ໃຊ້ໄມ້ເຈາະຮູໃນກົງຢາງ ຈາກນັ້ນກໍ່ຖອນເບັ້ຍຫວາຍຈາກໝານກ້າ[1] ແລ້ວປູກລົງໃນຮູກົງຢາງທີ່ກຽມໄວ.



*<u>ຮູບສະແດງ 3</u>: ການປູກແກ່ນດ້ວຍການນຳໃຊ້ໄມ້ໃຜ່*

ເອົາດິນກົມໃຫ້ແໜ້ນດີ. ໃຊ້ນ້ຳຫົດໃຫ້ພຽງພໍ ເພື່ອເຮັດໃຫ້ລະບົບຮາກຄົງຕົວ. ເບັ້ຍຫວາຍຂອງຕະກຸນ *Calamus* ເຕີບໃຫຍ່ດີໃນຮົ່ມ 60-80 % ສະນັ້ນ ມີຄວາມຈຳເປັນເຮັດພາມມຸງເປັນຮົ່ມດ້ວຍໄມ້ປ່ອງ ຫຼື ວັດຖຸອື່ນໆ.

---

[1] *ເວລາຖອນເບັ້ຍຫວາຍຢ່າໃຫ້ລະບົບຮາກຂອງມັນຂາດ.*



ຮູບສະແດງ 4: ສວນກ້າເບ້ຍຫວາຍທີ່ບ້ານສາລາເອເບ

# 4. ການຈັດການເຮືອນຊຳ

ການດູແລຮັກສາເບັ້ຍຫວາຍໃນເຮືອນຊຳ ມີຄວາມສຳຄັນຍິ່ງ ເພື່ອລຸດຜ່ອນອັດຕາການຕາຍລົງ. ເມັດພັນຫວາຍຂອງຕະກຸນ *Calamus yunnanensis var. Xishuangbannaensis, Calamus nambariensis var. Xishuangbannaensis and Calamus nambariensis var. Alpinus* ມີເນື້ອນວນໃນເມັດໃຫຍ່ ແລະ ອຸດົມສົມບູນດ້ວຍທາດອາຫານ ຈຶ່ງເປັນແນວພັນທີ່ທົນທານ ແລະ ດູແລຮັກສາງ່າຍ.

ໃນຊ່ວງລະດູແລ້ງຄວນໃຫ້ນ້ຳແກ່ເບັ້ຍຫວາຍໃນຕອນເຊົ້າ ຫຼື ຕອນແລງຢ່າງສະໝ່ຳສະເໝີ ລ້ຽງການໃຫ້ນ້ຳໃນຍາມຕອນບ່າຍທີ່ມີອາກາດຮ້ອນ.

ໃນຊ່ວງລະດູຝົນຄວນເອົາໃຈໃສ່ຕໍ່ການລະບາຍນ້ຳອອກຈາກໝານ ເພື່ອຫຼີກເວັ້ນນ້ຳຂັງຢູ່ໃນໝານກ້າ.

ແຕ່ລະຊ່ວງ ຄວນກວດກາເບິ່ງວ່າໃນກົງກ້າເບັ້ຍມີຮາກກົ່ນ ຫຼື ບໍ່ ກ້ານີກໍ່ຕ້ອງເອົາດິນມາໂອບຮາກໄວ້ທັນທີໂລດ ເພື່ອບໍ່ໃຫ້ກ້າຫ່ຽວແຫ້ງ ແລະ ຕາຍໃນທີ່ສຸດ.

ເມື່ອສັງເກດເຫັນໃບຫວາຍມີສີເຫຼືອງປົນຂຽວ ແລະ ເຕີບໃຫຍ່ຊ້າ ຄວນໃຫ້ຝຸ່ນຄອກ ແລະ ປຸຍເລັ່ງ ຫຼືປຸຍປະເພດອື່ນໆ (ເຊັ່ນ azophoska) ຊຶ່ງມີຄວາມເຂັ້ມຂຸ້ນ 1 %.

ວັດສະພືດໃນສວນກ້າຊ່ວງຊີງກັບຕົ້ນຫວາຍ ສະນັ້ນມີຄວາມຈຳເປັນເສັຍຫຍ້າເຮັດໃຫ້ສວນກ້າສະອາດຢູ່ສະເໝີ.

ໂດຍທົ່ວໄປແລ້ວ ເມື່ອເບັ້ຍຫວາຍມີອາຍຸໄດ້ 1 ປີ ແລະ ມີ 5-7 ໃບແມ່ນເໝາະສົມໃນການນຳໄປປູກ ລະດູປູກທີ່ແທກເໝາະແມ່ນລະດູຝົນ.

## 5. ຄຳແນະນຳ

ເພື່ອຮັບປະກັນການເຕີບໃຫຍ່ຂະຫຍາຍຕົວດີຂອງຕົ້ນຫວາຍ *Calamus*, ພວກເຮົາແນະນຳໃຫ້ທາງໂຄງການ PDDP ແຕ່ງຕັ້ງສະຫາຍໜຶ່ງພິເສດ ເພື່ອໄປຕິດຕາມສະພາບການເຕີບໃຫຍ່ຂອງຕົ້ນຫວາຍຢ່າງສະໝ່ຳສະເໝີທີ່ບ້ານ ສາລະເຣ່ເບ ແລະ ຈັນເທິງ ຖ້າມີບັນຫາກໍ່ຮຽກຮ້ອງໃຫ້ປະຊາຊົນເຂດນັ້ນຊ່ວຍ.